ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1016 /ອຄ.ກຂອ.

ນະຄອນຫລວງວຽງຈັນ, ວັນທີ. 05 ມິຖຸນາ 2014

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການປະກາດໃຊ້ລະບຽບແຫຼ່ງກຳເນີດສະເພາະທີ່ນຳໃຊ້ກັບແຕ່ລະຜະລິດຕະພັນ ຫຼື PSR ຂອງສັນຍາການຄ້າດ້ານສິນຄ້າ ອາຊຽນ-ຈີນ ທີ່ໂອນຍ້າຍຈາກລະຫັດສິນຄ້າ ລະບົບເອກະພາບອາຊຽນ ປີ 2007 ມາເປັນ 2012

- ອີງໃສ່ສັນຍາການຄ້າດ້ານສິນຄ້າ ຂອງສັນຍາກອບການຮ່ວມມືເສດຖະກິດຮອບດ້ານລະຫວ່າງ ອາຊຽນ ແລະ ສປ ຈີນ ທີ່ໄດ້ຮັບການລົງນາມໃນວັນທີ 29 ພະຈິກ ປີ 2004 ທີ່ ສປປ ລາວ;
- ອີງໃສ່ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການປະກາດໃຊ້ລະບຽບການແຫຼ່ງກຳເນີດສິນຄ້າ ຂອງສັນຍາການຄ້າດ້ານຜະລິດຕະພັນ ອາຊຽນ-ຈີນ ສະບັບເລກທີ 1516/ອຄ.ກຂອ ລົງວັນທີ 12 ກັນຍາ 2008;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 522/ນຍ ລົງວັນທີ 23 ທັນວາ 2011 ວ່າດ້ວຍການ ຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະການຄ້າ;
- ອີງໃສ່ກອງປະຊຸມຂອງໜ່ວຍປະຕິບັດງານແຫຼ່ງກຳເນີດສິນຄ້າ ອາຊຽນ-ຈີນ ຄັ້ງທີ 5 ລະຫວ່າງວັນທີ 12-13 ມີນາ 2014 ທີ່ ສປ ຈີນ ທີ່ໄດ້ສຳເລັດການປັບປຸງລະບຽບແຫຼ່ງກຳເນີດສະເພາະທີ່ນຳໃຊ້ກັບແຕ່ລະຜະລິດຕະພັນ ຫຼື PSR;
- ອີງຕາມການສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ.

### ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ ດັ່ງນີ້:

ມາດຕາ 01: ປະກາດໃຊ້ລະບຽບແຫຼ່ງກຳເນີດສະເພາະທີ່ນຳໃຊ້ກັບແຕ່ລະຜະລິດຕະພັນ ຫຼື PSR (Product Specific Rules) ຂອງສັນຍາການຄ້າດ້ານສິນຄ້າ ອາຊຽນ-ຈີນ ທີ່ໂອນຍ້າຍຈາກ ລະຫັດສິນຄ້າລະບົບເອກະພາບອາຊຽນ ປີ 2007 ມາເປັນ 2012 ຈຳນວນ 526 ລາຍການ.

ມາດຕາ 02: ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ຮັບຜິດຊອບ ແນະນຳ ແລະ ເຜີຍແຜ່ ວິທີຈັດຕັ້ງປະຕິບັດລະອຽດກ່ຽວກັບລະບຽບການດັ່ງກ່າວ ເພື່ອໃຫ້ຂໍ້ຕົກລົງສະບັບນີ້ ຖືກປະຕິບັດຢ່າງໄດ້ຮັບຜົນດີ.

ມາດຕາ 03: ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ ວັນທີ 01 ກໍລະກົດ 2014 ເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະການຄ້າ

ລັດຖະມົນຕີ

ນ. ເຂັມມະນີ ພົນເສນາ